**ມິຊຊາອາທິດທີ 3 ກຳນົດບຳເພັນສິນປີ C**

**ວັນທີ 24 ມີນາ 2019**



**ພຣະວໍລະສານນັກບຸນລູກາ 13, 1-9**

ໃນເວລານັ້ນ, ມີຄົນມາເລົ່າເລື່ອງທີ່ເປັນມາແກ່ຊາວກາລີເລໃຫ້ພຣະເຢຊູເຈົ້າຟັງວ່າ: ປີລາໂຕໄດ້ເອົາເລືອດຂອງພວກເຂົາມາປົນໃສ່ກັບເຄື່ອງບູຊາທີ່ພວກເຂົາຖະຫວາຍ. ພຣະເຢຊູເຈົ້າຕອບວ່າ: ພວກເຈົ້າຄິດວ່າຊາວກາລີເລເຫລົ່ານັ້ນໄດ້ທຳຜິດຫລາຍກວ່າຊາວກາລີເລອື່ນບໍ? ຈຶ່ງຕ້ອງຖືກໂທດດັ່ງນີ້? ເຮົາບອກພວກເຈົ້າວ່າ ບໍ່ແມ່ນດັ່ງນີ້ດອກ. ແຕ່ວ່າຖ້າພວກເຈົ້າບໍ່ກັບຈິດປ່ຽນໃຈ, ພວກເຈົ້າກໍຈະຕາຍພິນາດໝົດສິ້ນດັ່ງດຽວກັນ. ແລະພວກສິບແປດຄົນທີ່ຫໍຊີໂລເອລົ້ມທັບຕາຍນັ້ນ, ພວກເຈົ້າຄິດວ່າເຂົາເປັນຄົນບາບຫລາຍກວ່າຊາວເຢລູຊາແລມອື່ນບໍ? ເຮົາບອກພວກເຈົ້າວ່າ ບໍ່ແມ່ນດັ່ງນັ້ນດອກ. ພວກເຈົ້າກໍດັ່ງດຽວກັນ, ຖ້າບໍ່ກັບຈິດປ່ຽນໃຈ ພວກເຈົ້າກໍຈະຕາຍໝົດທຸກຄົນ.

ແລ້ວພຣະອົງກ່າວຄຳປຽບທຽບຕໍ່ໄປນີ້ວ່າ: ມີຄົນຜູ້ໜຶ່ງໄດ້ປູກກົກເດື່ອໄວ້ໃນສວນຂອງຕົນກົກໜຶ່ງ. ເມື່ອເວລາອອກມາເກັບໝາກ ກໍບໍ່ເຫັນມີ. ເຂົາເລີຍເວົ້າກັບຄົນທຳສວນນັ້ນວ່າ: ໄດ້ສາມປີແລ້ວ, ເຮົາມາເກັບໝາກຈາກກົກເດື່ອນີ້ແຕ່ບໍ່ມີໝາກ. ຈົ່ງປ້ຳມັນຖິ້ມເສຍຮົກດິນລ້າໆ. ຄົນທຳສວນຕອບວ່າ: ນາຍເອີຍ! ຂ້ານ້ອຍຂໍລອງເບິ່ງອີກປີໜຶ່ງກ່ອນ, ຂ້ານ້ອຍຈະແປງດິນອອ້ມກົກມັນແລະໃສ່ຝຸ່ນເບິ່ງ, ລາງເທື່ອປີໜ້າມີໝາກກໍບໍ່ຈັກ. ຖ້າບໍ່ເປັນດັ່ງນັ້ນ, ຂໍໃຫ້ທ່ານສັ່ງໃຫ້ປ້ຳມັນຖິ້ມເສຍ.

ນີ້ແມ່ນວາຈາຂອງພຣະກຣິສໂຕເຈົ້າ

**ບົດແບ່ງປັນ: ລກ 13, 1-9**

ວັນອາທິດທີ່ຜ່ານມາ, ພຣະເຢຊູເຈົ້າໄດ້ປ່ຽນສະພາບພຣະກາຍຮຸ່ງເຮືອງຂອງພຣະອົງໃຫ້ພວກສາວົກທັງສາມເຫັນບົນພູເຂົາ ອັນແມ່ນເຄື່ອງໝາຍບອກລ່ວງໜ້າເຖິງການກັບເປັນຄືນມາຢ່າງຮຸ່ງເຮືອງຂອງພຣະອົງໃນວັນທີສາມ.

ວັນນີ້, ພຣະເຢຊູເຈົ້າສືບຕໍ່ບອກສອນພວກເຮົາໃຫ້ຮູ້ຈັກສັງເກດເຄື່ອງໝາຍໃນຊີວິດຂອງພວກເຮົາ ແລະເປັນຕົ້ນໃນສະພາບແວດລ້ອມອ້ອມຂ້າງພວກເຮົາ ເພື່ອຈະສຳພັດໄດ້ເຖິງການປະຈັກຢູ່ຂອງພຣະເຈົ້າ.

ຕາມທຳມະດາ, ເມື່ອພວກເຮົາພົບກັບຄວາມສຳເລັດໃນຊີວິດ ພວກເຮົາມັກຈະຄິດວ່າໝາກຜົນແຫ່ງຄວາມສຳເລັດນີ້ມາຈາກຄວາມສາມາດ, ພາລະກຳລັງແລະຄວາມຄິດສ້າງສັນຂອງພວກເຮົາ. ແຕ່ເມື່ອພວກເຮົາເຫັນຄົນອື່ນພົບອຸປະສັກ, ຄວາມຫຍຸ້ງຍາກ, ການທົດສອບ ຫລືໄພອັນຕະລາຍ ພວກເຮົາມັກຈະຄິດວ່າສິ່ງບໍ່ດີເຫລົ່ານີ້ແມ່ນໝາກຜົນແຫ່ງບາບໂທດທີ່ເຂົາໄດ້ສ້າງໄວ້.

ແຕ່ວາຈາຂອງພຣະເຈົ້າວັນນີ້ເຊີນຊວນພວກເຮົາໃຫ້ປ່ຽນທັດສະນະແນວຄິດໃໝ່: ແທນທີ່ຈະເບິ່ງເຫດການບໍ່ດີຕ່າງໆທີ່ເກີດຂຶ້ນເປັນສິ່ງບໍ່ກ່ຽວຄ້ອງຫຍັງກັບພວກເຮົາ. ໃຫ້ພວກເຮົາຄິດວ່າສິ່ງເຫລົ່ານັ້ນເປັນເຄື່ອງໝາຍບອກພວກເຮົາໃຫ້ຮູ້ວ່າ ສິ່ງບໍ່ດີຫລືໄພອັນຕະລາຍທີ່ເກີດກັບຄົນອື່ນນັ້ນອາດຈະເກີດຂຶ້ນກັບພວກເຮົາເຊັ່ນດຽວກັນ, ຖ້າພວກເຮົາບໍ່ເຝົ້າລະວັງແລະກັບຈິດປ່ຽນໃຈ. ດັ່ງນັ້ນ, ກຳນົດບຳເພັນສິນຈຶ່ງເປັນຊ່ວງເວລາໃຫ້ພວກເຮົາໄດ້ເບິ່ງຄືນຊີວິດທີ່ຜ່ານມາຂອງຕົນບໍ່ວ່າຈະແມ່ນ: ຍາມມ່ວນຊື່ນ ກໍຄືຍາມໂສກເສົ້າ; ຍາມສຸຂະພາບດີ ກໍຄືຍາມເຈັບເປັນ, ຍາມເຊື່ອໝັ້ນ ກໍຄືຍາມສິ້ນຫວັງ. ເພື່ອຫຍັງ? ເພື່ອພວກເຮົາຈະເຫັນໄດ້ນໍ້າພຣະໄທຂອງພຣະເຈົ້າໃນຊີວິດຂອງພວກເຮົາ. ແລະເປັນຕົ້ນເພື່ອພວກເຮົາຈະໄດ້ດັດແປງແກ້ໄຂສິ່ງທີ່ຍັງບໍ່ຖືກຕ້ອງສອດຄ່ອງກັບແຜນການຂອງພຣະເຈົ້າໃນຊີວິດຂອງພວກເຮົາໃຫ້ນັບມື້ນັບດີຂຶ້ນ. ແຕ່ບັນຫາກໍຄື ສິ່ງທີ່ກ່າວມານີ້ບໍ່ແມ່ນເລື່ອງງ່າຍໃນການປະຕິບັດ. ເພາະພວກເຮົາລ້ວນແຕ່ເປັນຄົນອ່ອນແອແລະຄົນບາບ. ແລະພວກເຮົາລ້ວນແຕ່ຕ້ອງການເວລາໃນການກັບຈິດປ່ຽນໃຈ.

ດັ່ງນັ້ນ, ວາຈາຂອງພຣະເຈົ້າວັນນີ້ຜ່ານທາງເລື່ອງປຽບທຽບຄົນທຳສວນໝາກເດື່ອທີ່ຮ້ອງຂໍກັບເຈົ້າຂອງສວນໃຫ້ຕໍ່ເວລາອີກໜ້ອຍໜຶ່ງ ເພື່ອກົກໝາກເດື່ອຈະໄດ້ອອກໝາກຜົນ. ສິ່ງນີ້ສະທ້ອນໃຫ້ພວກເຮົາເຫັນເຖິງຄວາມເມດຕາປານີແລະຄວາມມານະອົດທົນຂອງພຣະເຢຊູເຈົ້າທີ່ບໍ່ຢຸດຢ່ອນວິງວອນພຣະບິດາເຈົ້າຊ່ວຍພວກເຮົາ. ເພາະພຣະອົງບໍ່ປາດຖະໜາໃຫ້ມະນຸດຕ້ອງພິນາດ ແຕ່ໃຫ້ເຂົາມີຊີວິດແລະກັບມາຫາພຣະເຈົ້າ. ຂໍໃຫ້ວາຈາຂອງພຣະເຈົ້າວັນນີ້ເປັນກຳລັງໃຈແລະຄວາມຫວັງໃຫ້ພວກເຮົາຜູ້ກຳລັງເດີນທາງຢູ່ໃນໂລກນີ້ ແລະເປັນຕົ້ນຜູ້ກຳລັງຕໍ່ສູ້ກັບການປະຈົນຫລອກລວງຕ່າງໆໃນຊ່ວງເວລາ 40 ວັນນີ້, ຈະໄດ້ສືບຕໍ່ເສັ້ນທາງແຫ່ງການເຂນຂອງຕົນພ້ອມກັບພຣະເຢຊູເຈົ້າ. ແນ່ນອນ, ພ້ອມກັບພຣະອົງພວກເຮົາຈະໄດ້ໄປເຖິງເສັ້ນໄຊອັນແມ່ນວັນບຸນປາສກາທີ່ຈະມາເຖິງ. ອາແມນ

ຄຸນພໍ່ ອັງຕວນ ກຽດຕິສັກ